ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ເຈົ້າແຂວງ

ເລກທີ 1078/ຈຂ.ບກ.

ບໍ່ແກ້ວ, ລົງວັນທີ 28/11/2022

## ຄໍາສັ່ງ

## ກ່ຽວກັບການເພີ່ມທະວີຄວາມຮັບຜິດຊອບຂອງຄະນະພັກ, ຄະນະນໍາແຕ່ລະຂັ້ນ ໃນການຢຸດຕິການຖາງປ່າ-ປູກຝິ່ນໃນຂອບເຂດທົ່ວແຂວງ

**ເຖິງ:** ບັນດາທ່ານ ຫົວໜ້າພະແນກການ-ອົງການອ້ອມຂ້າງແຂວງ, ຫົວໜ້າກອງບັນຊາການທະຫານແຂວງ, ຫົວໜ້າກອງບັນຊາການ ປກສ ແຂວງ ແລະ ບັນດາ ທ່ານເຈົ້າເມືອງ 5 ເມືອງ.

**ເລື່ອງ:** ເພີ່ມທະວີຄວາມຮັບຜິດຊອບ ຂອງຄະນະພັກ, ຄະນະນໍາ ໃນການຕ້ານ ແລະ ແກ້ໄຂຢຸດຕິການຖາງປ່າ-ປູກຝິ່ນໃນຂອບເຂດທົ່ວແຂວງບໍ່ແກ້ວ.

- **ອີງຕາມ:** ຄໍາສັ່ງເລກທີ 02 ຂອງກົມການເມືອງສູນກາງພັກວ່າດ້ວຍການເພີ່ມທະວີການນໍາພາ-ຊີ້ນໍາຂອງຄະນະພັກແຕ່ລະຂັ້ນຕໍ່ການສະກັດກັ້ນແກ້ໄຂບັນຫາຢາເສບຕິດ.
- **ອີງຕາມ:** ແຜນຈັດຕັ້ງ-ຜັນຂະຫຍາຍວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຢູ່ແຂວງບໍ່ແກ້ວ ແລະ ແຜນການດໍາເນີນງານ 2021-2023 ແລະ ສະພາບການທີ່ເກີດຂຶ້ນໃນປັດຈຸບັນ.

ໄລຍະຜ່ານມາຄະນະພັກ-ຄະນະນໍາແຕ່ລະຂັ້ນ ກໍໄດ້ເອົາໃຈໃສ່ໃນການຊີ້ນໍາ-ນໍາພາຂະແໜງການທີ່ກ່ຽວຂ້ອງຂັ້ນແຂວງ, ຂັ້ນເມືອງ ຕໍ່ກັບການຕ້ານສະກັດກັ້ນ ແລະ ແກ້ໄຂບັນຫາການປູກຝິ່ນ ຂອງປະຊາຊົນຈໍານວນໜຶ່ງທີ່ຢູ່ຫ່າງໄກຊອກຫຼີກ ດ້ວຍການທໍາລາຍສວນປູກຝິ່ນ ແລະ ດໍາເນີນການສຶກສາອົບຮົມຕໍ່ຜູ້ທີ່ລະເມີດລະບຽບກົດໝາຍໃນແຕ່ລະປີ ແຕ່ຖ້າທຽບໃສ່ກັບຄວາມເປັນຈິງແລ້ວ, ພວກເຮົາຍັງບໍ່ທັນສາມາດແກ້ໄຂການຖາງປ່າ-ປູກຝິ່ນໄດ້ຢ່າງຂາດຕົວເຮັດໃຫ້ປະຊາຊົນຈໍານວນໜຶ່ງຍັງສືບຕໍ່ມີການຖາງປ່າ-ປູກຝິ່ນຢູ່ບາງເມືອງ ສະນັ້ນ, ເພື່ອເຮັດໃຫ້ແຂວງບໍ່ແກ້ວ ສາມາດຕ້ານ ແລະ ສະກັດກັ້ນ ການລັກລອບຖາງປ່າ-ປູກຝິ່ນໄດ້ຢ່າງຂາດຕົວ ທັງເປັນການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍ ການແກ້ໄຂບັນຫາຢາເສບຕິດຢູ່ແຂວງບໍ່ແກ້ວ ໃຫ້ໄດ້ຢ່າງຂາດຕົວ ແລະ ຮັບຜົນສໍາເລັດຕາມແຜນ.

## ເຈົ້າແຂວງຈຶ່ງອອກຄໍາສັ່ງ:

1). ໃຫ້ຄະນະພັກ, ຄະນະນໍາພະແນກການທີ່ກ່ຽວຂ້ອງ ແລະ ບັນດາ ທ່ານເຈົ້າເມືອງ ເພີ່ມທະວີຄວາມຮັບຜິດຊອບຂອງຕົນໃນການຕິດຕາມ, ກວດກາ, ເຝົ້າລະວັງ, ຄວບຄຸມ ແລະ ແກ້ໄຂບັນຫາການລັກລອບປູກຝິ່ນຢູ່ພາຍໃນຂອບເຂດຄວາມຮັບຜິດຊອບຂອງຕົນຢ່າງເຂັ້ມງວດ; ມີການປະສານງານຢ່າງກົມກຽວລະຫວ່າງແຂວງກັບບັນດາເມືອງ ແລະ ຂະແໜງການທີ່ກ່ຽວຂ້ອງຂັ້ນແຂວງ ເພື່ອພ້ອມກັນແກ້ໄຂການລັກລອບຖາງປ່າປູກຝິ່ນ, ມີການແບ່ງຄວາມຮັບຜິດຊອບໃຫ້ພາຍໃນຄະນະພັກ, ຄະນະປະຈໍາບັນດາເມືອງ ລົງຊີ້ນໍາ-ບັນຊາແກ້ໄຂຕົວຈິງ ຢູ່ແຕ່ລະຈຸດສຸມກຸ່ມບ້ານ ກໍລະນີຫາກມີປະຊາຊົນຝ່າຝືນມີການລັກລອບປູກຝິ່ນຢູ່ຂອບເຂດເມືອງໃດ ແມ່ນມອບຄວາມຮັບຜິດຊອບໃຫ້ເມືອງນັ້ນ ເປັນເຈົ້າການໃນການແກ້ໄຂຢ່າງເດັດຂາດ ມີການປະສານງານກັບຂະແໜງການທີ່ກ່ຽວຂ້ອງຂັ້ນແຂວງ ເພື່ອລົງແກ້ໄຂຕົວຈິງຊ່ວຍຕາມຄວາມເໝາະສົມ ໄປພ້ອມໆກັບການຫັນເປັນບັ້ນລົງກໍ່ສ້າງ

ຮາກຖານການເມືອງ ເພື່ອສຶກສາອົບຮົມການເມືອງແນວຄິດແຕ່ຫົວທີ ເພື່ອໃຫ້ປະຊາຊົນຮັບຮູ້ເຂົ້າໃຈຕໍ່ລະບຽບກົດໝາຍ, ແນວທາງນະໂຍບາຍຂອງພັກ-ລັດ, ຮູ້ສ້າງອາຊີບທີ່ໝັ້ນຄົງເທື່ອລະກ້າວ ຕິດພັນກັບການປຸກລະດົມປະຊາຊົນທີ່ຢູ່ປາງ, ຢູ່ປ່າແບບເລື່ອນລ່ອຍ ໃຫ້ອອກມາທຳມາຫາກິນຢູ່ພາຍໃນບ້ານ.

2). ມອບຄວາມຮັບຜິດຊອບໃຫ້ແກ່ຄະນະພັກຮາກຖານ, ເລຂາໜ່ວຍພັກບ້ານ, ອົງການຈັດຕັ້ງບ້ານທຸກພາກສ່ວນມີສ່ວນຮ່ວມໃນການແກ້ໄຂການປູກຝິ່ນ ໂດຍເລີ່ມແກ້ໄຂຈາກການກະກຽມເນື້ອທີ່ດິນ, ເກັບແນວພັນ, ທຳລາຍຕົ້ນຝິ່ນ ແລະ ປຸກລະດົມໃຫ້ຜູ້ຕິດຝິ່ນເຂົ້າບຳບັດດ້ວຍຕົນເອງ.

3). ໃຫ້ກອງບັນຊາການທະຫານແຂວງ ແລະ ກອງບັນຊາການປ້ອງກັນຄວາມສະຫງົບແຂວງ ເປັນເຈົ້າການປະສານສົມທົບກັບບັນດາເມືອງໃນການສ້າງແຜນການເຄື່ອນໄຫວລະອຽດ ພ້ອມທັງມອບໝາຍວຽກງານຢ່າງຂາດຕົວໃຫ້ສາຍຕັ້ງຂອງຕົນຂັ້ນເມືອງ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງວາງແຜນກຳລັງສະເພາະ ລົງເຄື່ອນໄຫວ ແກ້ໄຂຢ່າງຂາດຕົວແຕ່ຫົວທີ່ຢູ່ແຕ່ລະພື້ນທີ່.

4). ພະແນກການ-ອົງການທີ່ກ່ຽວຂ້ອງຂັ້ນແຂວງ-ເມືອງ ຖືເອົາການແກ້ໄຂວຽກງານດັ່ງກ່າວ ເປັນຄວາມຮັບຜິດຊອບໂດຍກົງ ເພື່ອປົ່ນອ້ອມເຮັດວຽກງານການເມືອງ-ແນວຄິດ, ສຶກສາອົບຮົມເປົ້າໝາຍ, ອຳນວຍຄວາມສະດວກດ້ານຕ່າງໆ ໃຫ້ແກ່ຂະແໜງການທີ່ກ່ຽວຂ້ອງ ລວມທັງກະກຽມ ແລະ ປຶກສາຫາລືວິທີການແກ້ໄຂຜົນກະທົບ ທີ່ຈະຕາມມາ ໂດຍປະສານສົມທົບກັບບັນດາບໍລິສັດ, ຜູ້ປະກອບການ ທີ່ໄດ້ຮັບສິດດຳເນີນທຸລະກິດຕ່າງໆທົດແທນການປູກຝິ່ນຢູ່ແຂວງບໍ່ແກ້ວ ມີຄວາມຮັບຜິດຊອບ ຕາມສັນຍາໃນການປັບປຸງຄຸນນະພາບຊີວິດປະຊາຊົນໃນກຸ່ມເປົ້າໝາຍ.

5). ກໍລະນີຫາກມີບຸກຄົນໃດໜຶ່ງ ທີ່ລະເມີດລັກລອບປູກຝິ່ນ ມີລັກສະນະບໍ່ເຄັດລາບ ແມ່ນໃຫ້ດຳເນີນມາດຕະການ ຕາມລະບຽບກົດໝາຍຢ່າງເຂັ້ມງວດ ພ້ອມນັ້ນ ກໍໃຫ້ປະຕິບັດລະບຽບກົດໝາຍຕໍ່ຜູ້ທີ່ສົມຮູ້ຮ່ວມຄິດໃນກໍລະນີຕ່າງໆ ຢ່າງເໝາະສົມ.

6). ມອບໃຫ້ບັນດາເມືອງ ເປັນເຈົ້າການໃນການຕິດຕາມ, ກວດກາຂອບເຂດຄວາມຮັບຜິດຊອບຂອງຕົນເອງຢ່າງຕໍ່ເນື່ອງ ແລະ ທົ່ວເຖິງ ເພື່ອບໍ່ໃຫ້ປະຊາຊົນສືບຕໍ່ປູກຝິ່ນຢ່າງຕໍ່ເນື່ອງຂອງແຕ່ລະປີໃນເມືອງໃດໜຶ່ງ.

7). ຊ່ວງໄລຍະ ຈັດຕັ້ງປະຕິບັດ ຫາກມີຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ ໃຫ້ລາຍງານ ຂໍທິດຊີ້ນຳຕໍ່ຄະນະປະຈຳພັກແຂວງເປັນແຕ່ລະໄລຍະ.

8). ຄຳສັ່ງສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງ ແຂວງບໍ່ແກ້ວ**

ແຂວງ ບໍ່ແກ້ວ

ເຈົ້າແຂວງ

ປອ ບົວຄົງ ນາມມະວົງ